**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
=====000=====

ກະຊວງສາທາລະນະສຸກ
ກອງເລຂາຄະນະກຳມະການປະສານງານ
ກອງທຶນໂລກຕ້ານເອດ, ວັນນະໂຣກ ແລະ ໄຂ້ຍຸງ
ສປປ ລາວ

# ບົດບັນທຶກກອງປະຊຸມຄະນະກຳມະການປະສານງານກອງທຶນໂລກ ຄັ້ງທີ 01 - ສົກປີ 2018-2019

ກອງປະຊຸມຄະນະກຳມະການປະສານງານກອງທຶນໂລກ (CCM) ແມ່ນຈະໄດ້ຈັດຂຶ້ນທຸກໆ 3 ເດືອນເພື່ອປຶກສາຫາລື, ຮັບຟັງການລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອໃນຮອບປະຈຸບັນ, ການຮັບຮອງ, ແລະ ການຕັດສິນບັນຫາຕ່າງໆກ່ຽວກັບການຈັດຕັ້ງປະຕິບັດວຽກງານໂຄງການຂອງກອງທຶນໂລກ. ກອງປະຊຸມຄັ້ງນີ້ ໄດ້ຈັດຂຶ້ນເປັນຄັ້ງທີ 01 ຂອງສົກປີ 2018-2019 ໂດຍການເປັນປະທານຂອງ ທ່ານ ດຣ. ສຸລານີ ຈັນສີ, ຮອງປະທານຄະນະກຳມະການປະສານງານກອງທຶນໂລກ.

I. **ວັນເວລາ:** ວັນສຸກ, ທີ 07 ທັນວາ 2018, ເວລາ 13:30 ເຖິງ 16:30.
II. **ສະຖານທີ່:** ຫ້ອງປະຊຸມຊັ້ນ 3 ກະຊວງສາທາລະນະສຸກ.
III. **ຜູ້ເຂົ້າຮ່ວມ:** ສະມາຊິກສົມບູນ ແລະ ສຳຮອງ ຈຳນວນ 19 ທ່ານ (ມີສິດອອກສຽງໄດ້ 17 ທ່ານ), ພາກສ່ວນອື່ນໆ ຈຳນວນ 28 ທ່ານ, ກອງເລຂາ CCM ຈຳນວນ 04 ທ່ານ ລວມທັງໝົດ 51 ທ່ານ.

IV. **ວາລະກອງປະຊຸມ:**

1. ສະເໜີຜົນການຢັ້ງມຢາມ ສປປ ລາວ ຂອງທີມງານກອງທຶນໂລກ;
2. ລາຍງານກ່ຽວກັບຂໍ້ແນະນຳຂອງກອງທຶນໂລກຕໍ່ບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອຈາກກອງທຶນໂລກ, ບົດລາຍງານການກວດສອບ ແລະ ສະພາບທີ່ກ່ຽວຂ້ອງກັບໂຄງການ ເຮສໄອວີ, ວັນນະໂຣກ ແລະ ໄຂ້ຍຸງ;
3. ລາຍງານຜົນການປະຊຸມຂອງຄະນະກຳມະການຊີ້ນຳໂຄງການໄຂ້ຍຸງພາກພື້ນຄັ້ງທີ 12 ລະຫວ່າງວັນທີ 14-15 ພະຈິກ 2018;
4. ລາຍງານການຈັດຕັ້ງປະຕິບັດກິດຈະກຳຂອງຄະນະກຳມະການປະສານງານຂອງອົງການຈັດຕັ້ງທາງສັງຄົມ (NPA CC);
5. ບັນຫາອື່ນໆ ແລະ ປິດກອງປະຊຸມ.

V. **ການສະຫຼຸບສັງລວມໂດຍຫຍໍ້ກ່ຽວກັບຜົນຂອງການປຶກສາຫາລື ໃນກອງປະຊຸມ:**

1. **ສະເໜີຜົນການຢັ້ງມຢາມ ສປປ ລາວ ຂອງທີມງານກອງທຶນໂລກ ຄື:**
   - ໂຄງການສາມພະຍາດຈະຍັງຄົງສືບຕໍ່ໄປອີກໃນສົກປີ 2021-2023 ແຕ່ເງິນຊ່ວຍເຫຼືອຈະຫຼຸດລົງ ແລະ ການປະກອບສ່ວນດ້ານເງິນສົມທົບຂອງລັດຖະບານຈະຕ້ອງໄດ້ເພີ່ມຂຶ້ນ. ເງິນຊ່ວຍເຫຼືອດັ່ງກ່າວນີ້ ຈະໄດ້ຈັດຕັ້ງປະຕິບັດຮ່ວມກັນກັບໂຄງການ HANSA ຂອງທະນາຄານໂລກ ຍົກເວັ້ນງົບປະມານໃນການຈັດຊື້ຢາ ແລະ ອຸປະກອນການແພດ;

- ສປປ ລາວ ແມ່ນໄດ້ລິເລີ່ມບາດກ້າວທີ່ສຳຄັນໃນການປະຕິຮູບລະບົບສາທາລະນະສຸກ ໂດຍມຸ່ງໝັ້ນທີ່ຈະເຂົ້າເຖິງລະບົບປະກັນທຸກຖ້ວນໜ້າ (UHC) ພາຍໃນປີ 2025 ຊຶ່ງທາງກອງທຶນໂລກກໍ່ຕັ້ງເປົ້າໝາຍໄວ້ເພື່ອໃຫ້ໄປຕາມທິດທາງແລະແຜນການດັ່ງກ່າວນັ້ນ;
- ໃນຊ່ວງສົກປີ 2021-2023 ກອງທຶນໂລກ ແລະ ທະນາຄານໂລກ ຈະໄດ້ເຮັດໂຄງການທົດລອງຮ່ວມກັນ ໃນ 4 ແຂວງ ເພື່ອທົດສອບກົນໄກການເຮັດວຽກຮ່ວມກັນ ຊຶ່ງ ສປປ ລາວ ຈະເປັນປະເທດທຳອິດທີ່ເປັນຕົວແບບໃນການທົດລອງນຳໃຊ້ກົນໄກການເຮັດວຽກຮ່ວມກັນກັບຜູ້ໃຫ້ທຶນອື່ນໆ,
- ໜ້າວຽກທີ່ CCM ຄວນເອົາໃຈໃສ່ ຄື:
  - ສືບຕໍ່ຕິດຕາມກວດກາຄວາມຄືບໜ້າຂອງການຈັດຕັ້ງປະຕິບັດບູລິມະສິດຕ່າງໆຂອງແຜນງານ;
  - ຕິດຕາມເງິນສົມທົບຂອງລັດຖະບານ;
  - ຕິດຕາມການໃຊ້ຈ່າຍເງິນສົມທົບຂອງລັດຖະບານໃນການຈັດຊື້ຢາ ARV ຜ່ານລະບົບ wambo

2. **ລາຍງານກ່ຽວກັບຂໍ້ແນະນຳຂອງກອງທຶນໂລກຕໍ່ບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອຈາກກອງທຶນໂລກ, ບົດລາຍງານການກວດສອບ ແລະ ສະພາບທີ່ກ່ຽວຂ້ອງກັບໂຄງການ ເອສໄອວີ, ວັນນະໂຣກ ແລະ ໄຂ້ຍຸງ:**
   - ທາງຫ້ອງການ PMU ໄດ້ລາຍງານບັນດາຄຳແນະນຳຕ່າງໆຂອງກອງທຶນໂລກຕໍ່ບົດລາຍງານການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອຈາກກອງທຶນໂລກ, ຜົນຂອງການກວດສອບ ແລະ ສະພາບກ່ຽວກັບການຈັດຕັ້ງເງິນຊ່ວຍເຫຼືອຂອງແຜນງານ ເອສໄອວີ, ວັນນະໂຣກ ແລະ ໄຂ້ຍຸງ;
   - ເງິນສົມທົບຂອງລັດຖະບານຂອງແຜນງານ HIV: ງົບປະມານທີ່ໄດ້ຂຶ້ນແຜນຂໍເພື່ອມາຈັດຕັ້ງປະຕິບັດກິດຈະກຳໃນສົກປີນັ້ນໆ ແມ່ນບໍ່ໄດ້ຮັບທັນເວລາ ເຊັ່ນ: ເງິນທີ່ຂຶ້ນແຜນຂໍໃນສົກປີ 2017-2018 ແມ່ນໄດ້ຮັບໃນສົກປີຕໍ່ມາ;
   - ບົດລາຍງານເງິນສົມທົບຂອງແຜນງານ TB: ເງິນສົມທົບທີ່ໄດ້ລາຍງານນີ້ ແມ່ນເບິ່ງຄືມີຈຳນວນໜ້ອຍ ເມື່ອທຽບກັບເງິນຕົວຈິງທີ່ໄດ້ຮັບ ເພາະວ່າຈຳນວນຄ່າໃຊ້ຈ່າຍທີ່ໄດ້ລາຍງານນີ້ ແມ່ນຍັງບໍ່ໄດ້ລວມເອົາເງິນຮ່ວງຂອງແຂວງເຂົ້າເທື່ອ ເນື່ອງຈາກວ່າທາງແຂວງຍັງບໍ່ທັນໄດ້ສົ່ງບົດລາຍງານມາໃຫ້ທາງສູນ NTC;
   - ກອງທຶນໂລກກ່າວວ່າ ການປະເມີນການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອຂອງໂຄງການແມ່ນຈະໄດ້ປະເມີນໃນທ້າຍປີທີສາມ. ກອງທຶນໂລກສາມາດປັບປ່ຽນໄປຕາມລະບຽບຫຼັກການຂອງປະເທດໃນເລື່ອງການລາຍງານຄ່າໃຊ້ຈ່າຍ ແຕ່ເຖິງຢ່າງໃດກໍ່ຕາມ ການເບີກຈ່າຍເງິນໃນງວດຕໍ່ໄປກໍ່ອີງໃສ່ຜົນຂອງການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອ ການເບີກຈ່າຍເງິນໃຫ້ແກ່ປະເທດອາດຈະປະສົບບັນຫາ ຖ້າຫາກວ່າບໍ່ສາມາດບັນລຸເປົ້າໝາຍໄດ້.

3. **ລາຍງານຜົນການປະຊຸມຂອງຄະນະກຳມະການຊີ້ນຳໂຄງການໄຂ້ຍຸງພາກພື້ນຄັ້ງທີ 12 ລະຫວ່າງວັນທີ 14-15 ພະຈິກ 2018:**
   - ທ່ານຜູ້ຕາງໜ້າຈາກກອງເລຂາ RSC ໄດ້ນຳສະເໜີກ່ຽວກັບຜົນຂອງກອງປະຊຸມຄະນະກຳມະການຊີ້ນຳໂຄງການໄຂ້ຍຸງພາກພື້ນຄັ້ງທີ 12 ທີ່ໄດ້ຈັດຂຶ້ນທີ່ນະຄອນຫຼວງວຽງຈັນ.

4. **ລາຍງານການຈັດຕັ້ງປະຕິບັດກິດຈະກຳຂອງຄະນະກຳມະການປະສານງານຂອງອົງການຈັດຕັ້ງທາງສັງຄົມ (NPA CC):**
   - ຜູ້ຕາງໜ້າຈາກຄະນະກຳມະການປະສານງານຂອງອົງການຈັດຕັ້ງທາງສັງຄົມ ໄດ້ລາຍງານກ່ຽວກັບຜົນຂອງການປະຊຸມ, ເຮັດວຽກຮ່ວມກັນ ແລະ ແລກປ່ຽນບົດຮຽນກັບກຸ່ມ ສາວບໍລິການ, ຊາຍຮ່ວມເພດກັບຊາຍ ແລະ ສະມາຄົມຕ່າງໆ ໃນບັນດາແຂວງພາກໃຕ້ (ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ, ສາລະວັນ) ແລະ ພາກເໜືອ (ຫຼວງພະບາງ, ບໍ່ແກ້ວ);

- ກອງທຶນໂລກ ໄດ້ສະເໜີໃຫ້ເອົາຄຳແນະນຳຕ່າງໆຂອງ NPA CC ເຂົ້າພິຈາລະນາໃນກິດຈະກຳຂອງໂຄງການ HIV ພາກພື້ນ ແລະ ກອງທຶນໂລກຍັງຂໍລາຍລະອຽດເພີ່ມເຕີມກ່ຽວກັບການກວດ HIV ໃຫ້ແກ່ນັກໂທດຕ່າງໆທີ່ຄ້າຍຄຸມຂັງ;
- ຜູ້ຕາງໜ້າ ຈາກ CHAS ໄດ້ກ່າວວ່າ ທາງສູນໄດ້ມີແຜນແລ້ວກ່ຽວກັບການກວດ HIV ໃຫ້ແກ່ນັກໂທດຕ່າງໆທີ່ຄ້າຍຄຸມຂັງ ແລະ ທາງສູນໄດ້ປຶກສາຫາລື ແລະ ຕົກລົງເຫັນດີກັບສູນ NTC ວ່າ ເວລາກວດ TB ໃຫ້ແກ່ນັກໂທດຕ່າງໆ ຈະຕ້ອງໄດ້ກວດ HIV ໄປພ້ອມ ແຕ່ກິດຈະກຳດັ່ງກ່າວນີ້ ແມ່ນຍັງບໍ່ທັນໄດ້ເອົາເຂົ້າໃນປີນີ້. ນອກຈາກນີ້ CHAS ຍັງກ່າວວ່າ NPA CC ແມ່ນຍັງບໍ່ໄດ້ຖືກອະນຸມັດໃຫ້ສ້າງຕັ້ງຕັ້ງຂຶ້ນຈາກກະຊວງພາຍໃນ ແລະ ບໍ່ສອດຄ່ອງກັບກົດໝາຍຂອງ ສປປ ລາວ ເທື່ອ;
- ຜູ້ຕາງໜ້າຈາກ ກາແດງລາວ ກ່າວວ່າ NPA CC ໄດ້ເຮັດວຽກໄປຕາມລະບຽບການຂອງກະຊວງພາຍໃນ ແລະ ຍັງໄດ້ຖືກຮັບຮູ້ຈາກ CCM. ສະມາຊິກຂອງ NPA CC ແມ່ນມາຈາກອົງການຈັດຕັ້ງທາງສັງຄົມ ແລະ ເປັນຕົວແທນຂອງຜູ້ໄດ້ຮັບຜົນກະທົບ. ເມື່ອກ່ອນ NPA CC ໄດ້ຮັບການສະໜັບສະໜູນໂດຍ ກາແດງຝຣັ່ງ ເພື່ອສ້າງຄວາມສາມາດ ແລະ ໃຫ້ຄວາມຮູ້ ແກ່ສະມາຊິກຂອງ NPA CC ກ່ຽວກັບສາມພະຍາດນີ້, ຕໍ່ມາກາແດງຝຣັ່ງໄດ້ຍ້າຍຫ້ອງການອອກຈາກ ສປປ ລາວ ແລະ ໄດ້ໃຫ້ເງິນຈຳນວນ 27,000 ໂດລາ ໃຫ້ແກ່ກາແດງລາວ ເພື່ອສືບຕໍ່ຝຶກອົບຮົມໃຫ້ແກ່ສະມາຊິກຂອງ NPA CC;
- ຜູ້ຕາງໜ້າຈາກກະຊວງພາຍໃນໄດ້ກ່າວວ່າ NPA CC ແມ່ນຈະຕ້ອງໄດ້ຮັບອະນຸຍາດໃນການສ້າງຕັ້ງຕາມດຳລັດຂອງກະຊວງພາຍໃນ;
- ຜູ້ຕາງໜ້າຈາກ UNAIDS ໄດ້ກ່າວວ່າ ກາແດງລາວ ຈະຕ້ອງໄດ້ນຳສະເໜີບັນດາເອກະສານຕ່າງໆກ່ຽວກັບການສ້າງຕັ້ງ NPA CC ແລະ NPA CC ອາດຈະເປັນໜ່ວຍງານປະສານໜຶ່ງໃຫ້ແກ່ CCM.

ກອງປະຊຸມດັ່ງກ່າວນີ້ ໄດ້ສິ້ນສຸດລົງໃນເວລາ 17:00 ຂອງວັນທີ 07 ທັນວາ 2018.

ນະຄອນຫຼວງວຽງຈັນ, ວັນທີ 19 DEC 2018

ປະທານກອງປະຊຸມ

ທ່ານ ດຣ. ສຸລານີ ຈັນສີ

ຜູ້ສັງລວມເນື້ອໃນກອງປະຊຸມ

ທ່ານ ໜູກອນ ທະລັງສີ